ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ມະຕິ

## ກອງປະຊຸມໃຫຍ່ຜູ້ແທນ
## ອົງຄະນະພັກແຂວງອັດຕະປື ຄັ້ງທີ X ວັນທີ 11-12 ສິງຫາ 2015

ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງອັດຕະປື ຄັ້ງທີ X ໄດ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນເຊິ່ງໄດ້ດຳເນີນເປັນເວລາ 2 ວັນ ນັບແຕ່ ວັນທີ 11 ຫາ 12 ສິງຫາ 2015 ໂດຍມີສະຫາຍ ດຣ. ບຸນປອນ ບຸດຕະນະວົງ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ເຂົ້າຮ່ວມເປັນຜູ້ຊີ້ນຳກອງປະຊຸມ ແລະ ມີບັນດາສະຫາຍຈາກຄະນະຈັດຕັ້ງສູນກາງ, ຄະນະກວດກາສູນກາງ, ກະຊວງຂະແໜງການທີ່ກ່ຽວຂ້ອງ, ແຂວງຈຳປາສັກ, ສາລະວັນ, ເຊກອງ ແລະ ກອງພົນທີ 5 ເຂົ້າຮ່ວມ ຢ່າງພ້ອມພຽງ. ກອງປະຊຸມຄັ້ງນີ້ ດຳເນີນໄປພາຍໃຕ້ການເປັນປະທານຂອງ ສະຫາຍ ດຣ. ນາມ ວິຍະເກດ ກຳມະການສູນກາງພັກ, ເລຂາພັກແຂວງ ແລະ ບັນດາສະຫາຍຄະນະປະຈຳພັກແຂວງ, ມີຜູ້ແທນສົມບູນ 191 ສະຫາຍ, ຍິງ 30 ສະຫາຍ, ເຊິ່ງເປັນຕົວແທນໃຫ້ແກ່ສະມະຊິກພັກທົ່ວແຂວງ 7.095 ສະຫາຍ, ຍິງ 1.664 ສະ ຫາຍ; ແຂກຖືກເຊີນ 38 ສະຫາຍ, ຍິງ 8 ສະຫາຍ ທີ່ຕາງໜ້າໃຫ້ອະດີດການນຳ, ພະນັກງານບຳນານ-ປະຕິວັດອາວຸໂສ, ຄອບຄົວວິລະຊົນ-ນັກຮົບແຂ່ງຂັນ, ຄອບຄົວຕົວແບບ ແລະ ນັກທຸລະກິດພາຍໃນແຂວງ. ບັນດາຜູ້ແທນກອງປະຊຸມໄດ້ຍົກສູງຄວາມຮັບຜິດຊອບ ແລະ ສຸມສະຕິປັນຍາຂອງຕົນເຂົ້າໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ເນື້ອໃນຂອງກອງປະຊຸມຢ່າງກົງໄປກົງມາ, ໄດ້ເຮັດໃຫ້ກອງປະຊຸມສຳເລັດຕາມຈຸດປະສົງທີ່ວາງໄວ້.

I. ກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງອັດຕະປື ຄັ້ງທີ X ໄດ້ລົງມະຕິເປັນເອກະພາບ ແລະ ຮັບຮອງເອົາບັນດາເນື້ອໃນທີ່ສຳຄັນດັ່ງລຸ່ມນີ້:

ກອງປະຊຸມໄດ້ເຫັນພ້ອມກັນຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ກອງປະຊຸມໄດ້ເປັນເອກະພາບກັນຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນການຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ໃນ 5 ປີຜ່ານມາ. ພ້ອມນີ້ ກອງປະຊຸມຍັງໄດ້ເປັນເອກະສັນຮັບຮອງເອົາທິດທາງຄາດໝາຍສູ້ຊົນ ກ່ຽວກັບວຽກງານກໍ່ສ້າງ

ພັກ, ພະນັກງານ ແລະ ແຜນພັດທະນາ 5 ປີ ຄັ້ງທີ VIII ໄລຍະ 2016-2020, ຍຸດທະສາດ ຮອດ 2025 ແລະ ວິໄສທັດຮອດ 2030 ເຊິ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຮັບປະກັນໃຫ້ແຂວງອັດຕະປືມີສະເຖຍລະພາບທາງດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ, ເຮັດໃຫ້ວຽກງານ ປກຊ-ປກສ ມີຄວາມໜັກແໜ້ນເຂັ້ມແຂງກວ່າເກົ່າ, ປະຊາຊົນບັນດາເຜົ່າມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ ແລະ ຕັ້ງໜ້າປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດໃຫ້ປະກົດຜົນເປັນຈິງ.

2. ພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວດ້ວຍຈັງຫວະໄວ ແລະ ຕໍ່ເນື່ອງ, ອັດຕາການເຕີບໂຕດ້ານເສດຖະກິດຮອດປີ 2020 ເພີ່ມຂຶ້ນ 10%, ລາຍຮັບສະເລ່ຍຕໍ່ຫົວຄົນ ( GDP ) ບັນລຸໄດ້ 23.490.000 ກີບ ຫລືເທົ່າກັບປະມານ 2.900 ໂດລາ/ຄົນ/ປີ; ໃຫ້ສາມາດລົບລ້າງຄວາມທຸກຍາກໄດ້ໂດຍພື້ນຖານ, ອັດຕາຄອບຄົວທຸກຍາກຍັງເຫລືອບໍ່ເກີນ 5% ຂອງຈຳນວນຄອບຄົວທັງໝົດ.

- ໂຄງສ້າງເສດຖະກິດຂະຫຍາຍຕົວໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ; ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນຂອງແຂວງ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າຢ່າງແຂງແຮງ, ສົ່ງເສີມການຜະລິດກະສິກຳ,ຈັດສັນພູມລຳເນົາ ແລະ ຈັດສັນອາຊີບຄົງທີ່ໃຫ້ແກ່ປະຊາຊົນ, ພັດທະນາພື້ນຖານໂຄງລ່າງໃຫ້ມີການຂະຫຍາຍຕົວ, ພ້ອມທັງປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃຫ້ຍືນຍົງ, ຂະຫຍາຍຕາໜ່າງການສຶກສາ, ສາທາລະນະສຸກໄປສູ່ເຂດຊົນນະບົດ, ເຂດພູດອຍຫ່າງໄກສອກຫລີກໃຫ້ທົ່ວເຖິງ, ສືບຕໍ່ຮັກສາມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມທີ່ເປັນເອກະລັກຂອງເຜົ່າ. ປະຕິບັດນະໂຍບາຍດ້ານສະຫວັດດີການ-ສັງຄົມ ໃຫ້ເໝາະສົມ ແລະ ຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ.

- ໄລຍະ 2020 ຫາ 2025 ແລະ ຮອດ 2030 ແມ່ນເປັນໄລຍະພັດທະນາໃຫ້ໄວຂຶ້ນກວ່າເກົ່າດ້ວຍຈັງຫວະການເຕີບໂຕທາງດ້ານເສດຖະກິດສະເລ່ຍບໍ່ໃຫ້ຫຼຸດ 12% ຕໍ່ປີ.

3. ສູ້ຊົນພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້ຄວາມສາມາດ, ມີເຕັກນິກວິທະຍາສາດສູງ, ມີຄຸນສົມບັດສິນທຳປະຕິວັດ, ສຸຂະພາບແຂງແຮງ, ສ້າງສີມືແຮງງານທີ່ດີ ເພື່ອຕອບສະໜອງຄວາມຕ້ອງການໃນການພັດທະນາຕົວຈິງຂອງສັງຄົມ.

4. ຍົກສູງຄວາມສາມາດການນຳພາຂອງພັກ, ສຸມໃສ່ການປັບປຸງ-ກໍ່ສ້າງພັກໃຫ້ມີຄວາມປອດໃສ, ໜັກແໜ້ນເຂັ້ມແຂງ, ຮັບປະກັນບົດບາດເປັນແກ່ນນຳໃນລະບົບການເມືອງຂອງພັກ, ເພີ່ມທະວີຄວາມສາມັກຄີປະຊາຊົນບັນດາເຜົ່າ, ຍົກສູງປະສິດທິພາບການບໍລິຫານລັດໃຫ້ມີຄວາມສັກສິດ, ໂປ່ງໃສ-ວ່ອງໄວ, ຄຸ້ມຄອງລັດ-ຄຸ້ມຄອງສັງຄົມໃຫ້ໄປຕາມລະບຽບກົດໝາຍ.

5. ສືບຕໍ່ປະຕິບັດແນວທາງການຕ່າງປະເທດຂອງພັກ, ເປີດກວ້າງການພົວພັນຮ່ວມມືກັບປະເທດເພື່ອນມິດທີ່ມີຊາຍແດນຕິດຈອດກັນ ບົນພື້ນຖານແນວທາງການຕ່າງປະເທດຂອງພັກ, ຕາມຫລັກການເປີດກວ້າງການຮ່ວມມືຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະເຄົາລົບອຳນາດອະທິປະໄຕຂອງກັນ ແລະ ກັນ;

ເພີ່ມທະວີສາຍພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດ ກັບ ສສ ຫວຽດນາມ; ຣາຊະອະນາຈັກ ກຳປູເຈຍ ໂດຍສະເພາະແມ່ນແຂວງແຮກສ່ຽວທີ່ມີຊາຍແດນຕິດຈອດກັບແຂວງອັດຕະປື.

II. ກອງປະຊຸມໄດ້ຮັບຟັງການປະກອບຄຳເຫັນຈາກອົງຄະນະພັກຂອງ 3 ແຂວງ, ຜູ້ແທນກອງປະຊຸມທີ່ຕາງໜ້າໃຫ້ແຕ່ລະຂົງເຂດວຽກງານ ແລະ ຄອບຄົວຕົວແບບດ້ານຕ່າງໆ. ການປະກອບຄຳເຫັນດັ່ງກ່າວລ້ວນແລ້ວແຕ່ເປັນປະໂຫຍດເປັນບົດຮຽນໃຫ້ແກ່ການຊີ້ນຳ-ນຳພາຂອງພັກ. ຄຽງຄູ່ກັນນີ້, ຜູ້ແທນກອງປະຊຸມຍັງໄດ້ຕ້ອນຮັບການເຂົ້າອວຍພອນ ແລະ ຂໍ່ານັບຊົມເຊີຍຂອງກ້ອນກຳລັງເຍົາວະຊົນ-ຊາວໜຸ່ມ, ກຳລັງ ປກຊ-ປກສ ແລະ ມວນຊົນບັນດາເຜົ່າທົ່ວແຂວງອັດຕະປື, ອັນໄດ້ເຮັດໃຫ້ບັນຍາກາດກອງປະຊຸມໃຫຍ່ມີເນື້ອໃນອຸດົມສົມບູນ ແລະ ມີຊີວິດຊີວາຂຶ້ນຕື່ມ.

III. ກອງປະຊຸມໄດ້ເປັນເອກະສັນກັນ ຮັບຮອງເອົາເນື້ອໃນບົດສຳຫລວດການນຳພາລວມຂອງຄະນະບໍລິຫານງານພັກແຂວງ ສະໄໝທີ IX ເຊິ່ງໄດ້ຕີລາຄາຢ່າງພາວະວິໃສ, ກົງໄປກົງມາກ່ຽວກັບຜົນງານທີ່ຍາດມາໄດ້ໃນໄລຍະ 5 ປີ ຜ່ານມາ. ພ້ອມກັນນັ້ນ, ກໍ່ຍັງຊີ້ໃຫ້ເຫັນຈຸດອ່ອນ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າ.

IV. ຜູ້ແທນສົມບູນກອງປະຊຸມໄດ້ພ້ອມກັນໃຊ້ສິດປະຊາທິປະໄຕຂອງຕົນ ປ່ອນບັດເລືອກຕັ້ງເອົາຄະນະບໍລິຫານງານພັກແຂວງຊຸດໃໝ່ ບົນພື້ນຖານຖືກຕ້ອງຕາມມາດຖານເງື່ອນໄຂທີ່ໄດ້ກຳນົດໄວ້, ເຊິ່ງມີຜູ້ອອກສະໝັກເລືອກຕັ້ງ **34** ສະຫາຍ, ຍິງ **06** ສະຫາຍ ແລະ ເລືອກໄດ້ **29** ສະຫາຍ ຍິງ 04 ສະ ຫາຍ ຄື:

1. ສະຫາຍ ດຣ ນາມ ວິຍະເກດ
2. ສະຫາຍ ພອນສະໄໝ ມຽງລາວັນ
3. ສະຫາຍ ເລັດ ໄຊຍະພອນ
4. ສະຫາຍ ນາງ ມີນາພອນ ໄຊສົມພູ
5. ສະຫາຍ ບຸນຮຽນ ແກ້ວບົວພາດ
6. ສະຫາຍ ອຸ່ນຫລ້າ ໄຊຍະສິດ
7. ສະຫາຍ ສຸກສະໄໝ ຈັນທະມາດ
8. ສະຫາຍ ພັອ ກັນໄຍ ໄຊຍະສິດ
9. ສະຫາຍ ພັອ ທອງຈັນ ຈັນທະພົງ
10. ສະຫາຍ ບຸນມີ ບຸບຜາສະຫວັນ
11. ສະຫາຍ ຄຳບຸນ ດວງພະບາງ
12. ສະຫາຍ ສີສະຫວັນ ຈັນທະໄພບູນ
13. ສະຫາຍ ເພັດມີໄຊ ຄຳພັກດີ
14. ສະຫາຍ ທະນູໄຊ ບັນຊາລິດ
15. ສະຫາຍ ເພັດແກ້ວ ເຮືອງປັນຍາ
16. ສະຫາຍ ນາງ ບຸນນານ ບຸນນະແສງ
17. ສະຫາຍ ບຸນທະມາລີ ໝັ້ນອານົງ

18. ສະຫາຍ ບຸນທຽນ ວົງພູທອນ
19. ສະຫາຍ ຄໍາຫວັນ ຈັນທະໂຄດ
20. ສະຫາຍ ບຸນນາວ ຈັນດອນ
21. ສະຫາຍ ບຸນເສີດ ເສດທິລາດ
22. ສະຫາຍ ສົມໄຊ ແກ້ວໂພສີງ
23. ສະຫາຍ ສຸລິຈັນ ພອນແກ້ວ
24. ສະຫາຍ ນາງ ບັນທະໄລ ແກ້ວມະນີວົງ
25. ສະຫາຍ ປັນຍາ ໄຊຍະແສງ
26. ສະຫາຍ ບຸນໂຮມ ພິມມະສານ
27. ສະຫາຍ ລັດຕະນະພອນ ເທບສຸວັນ
28. ສະຫາຍ ນາງ ອໍາຄາ ສີຫາລາດ
29. ສະຫາຍ ລັດສະໝີ ວັນໄຊ

V. ກອງປະຊຸມຄັ້ງປະຖົມມະລຶກຄົບຄະນະບໍລິຫານງານພັກແຂວງ ໄດ້ປ່ອນບັດເລືອກຕັ້ງເອົາຄະນະປະຈໍາພັກແຂວງ, ເປັນເອກະພາບລົງປະຊາມະຕິເລືອກຕັ້ງເອົາເລຂາ ແລະ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານ ແລະ ຮອງປະທານຄະນະກວດກາພັກແຂວງ.

1). ເລືອກຕັ້ງເອົາຄະນະປະຈໍາພັກແຂວງ ດ້ວຍການປ່ອນບັດໂດຍກົງ, ລົງຄະແນນສຽງປິດລັບ, ມີຜູ້ອອກສະໝັກເລືອກຕັ້ງ 11 ສະຫາຍ, ຍິງ 01 ສະຫາຍ, ເລືອກໄດ້ 09 ສະຫາຍ ຍິງ 01 ສະຫາຍໄດ້ ດັ່ງນີ້:

1. ສະຫາຍ ດຣ ນາມ ວິຍະເກດ
2. ສະຫາຍ ພອນສະໄໝ ມຽງລາວັນ
3. ສະຫາຍ ເລັດ ໄຊຍະພອນ
4. ສະຫາຍ ບຸນຮຽນ ແກ້ວບົວພາດ
5. ສະຫາຍ ອຸ່ນຫລ້າ ໄຊຍະສິດ
6. ສະຫາຍ ນາງ ມີນາພອນ ໄຊສົມພູ
7. ສະຫາຍ ສຸກສະໄໝ ຈັນທະມາດ
8. ສະຫາຍ ພັອ ກັນໄຍ ໄຊຍະສິດ
9. ສະຫາຍ ພັອ ທອງຈັນ ຈັນທະພົງ

2). ກອງປະຊຸມເຫັນດີເປັນເອກະພາບລົງປະຊາມະຕິເລືອກຕັ້ງເອົາເລຂາ ແລະ ຮອງເລຂາພັກແຂວງໄດ້ ດັ່ງນີ້:

1. ສະຫາຍ ດຣ ນາມ ວິຍະເກດ ເປັນເລຂາຄະນະບໍລິຫານງານພັກແຂວງ
2. ສະຫາຍ ພອນສະໄໝ ມຽງລາວັນ ເປັນຮອງເລຂາຄະນະບໍລິຫານງານພັກແຂວງ
3. ສະຫາຍ ເລັດ ໄຊຍະພອນ ເປັນຮອງເລຂາຄະນະບໍລິຫານງານພັກແຂວງ
4. ສະຫາຍ ນາງ ມີນາພອນ ໄຊສົມພູ ເປັນຮອງເລຂາຄະນະບໍລິຫານງານພັກແຂວງ

3). ກອງປະຊຸມໄດ້ປ່ອນບັດເລືອກຕັ້ງເອົາປະທານ ແລະ ຮອງປະທານຄະນະກວດກາພັກແຂວງ ມີຜູ້ອອກສະໝັກເລືອກຕັ້ງປະທານຄະນະກວດກາພັກແຂວງ 2 ສະຫາຍ, ເລືອກເອົາ 1 ສະຫາຍ ແລະ ຮອງປະທານກວດກາອອກສະໝັກຮັບເລືອກຕັ້ງ 5 ສະຫາຍ, ເລືອກເອົາ 3 ສະຫາຍໄດ້ ດັ່ງນີ້:

1. ສະຫາຍ ບຸນທຽນແກ້ວບົວພາດ ເປັນປະທານຄະນະກວດກາພັກແຂວງ
2. ສະຫາຍ ອໍລະທັນ ລິນທະວົງ ເປັນຮອງປະທານຄະນະກວດກາພັກແຂວງ
3. ສະຫາຍ ໄກສອນ ສຸລິວົງ ເປັນຮອງປະທານຄະນະກວດກາພັກແຂວງ
4. ສະຫາຍ ຈິດປະສິງ ສິງສະຫວັດ ເປັນຮອງປະທານຄະນະກວດກາພັກແຂວງ

4) ກອງປະຊຸມໃຫຍ່ໄດ້ພ້ອມກັນໃຊ້ສິດຂອງຕົນ ປ່ອນບັດເລືອກຕັ້ງເອົາຜູ້ແທນສົມບູນ ແລະ ຜູ້ແທນສຳຮອງເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວ, ບົນພື້ນຖານຄວາມຖືກຕ້ອງສອດຄ່ອງກັບມາດຖານເງື່ອນໄຂ ທີ່ໄດ້ກຳນົດໄວ້, ເຊິ່ງມີຜູ້ສະໝັກເລືອກຕັ້ງ 17 ຫາຍ, ຍິງ 4 ສະຫາຍ, ເລືອກໄດ້ຜູ້ແທນສົມບູນ 14 ສະຫາຍ, ຍິງ 2 ສະຫາຍ ແລະ ຜູ້ແທນສຳຮອງ 2 ສະຫາຍໄດ້ ດັ່ງນີ້:

- **ຜູ້ແທນສົມບູນ:**

1. ສະຫາຍ ພອນສະໄໝ ມຽງລາວັນ
2. ສະຫາຍ ບຸນມີ ບຸບຜາສະຫວັນ
3. ສະຫາຍ ຄຳບຸນ ດວງພະບາງ
4. ສະຫາຍ ນາງ ບຸນນານ ບຸນນະແສງ
5. ສະຫາຍ ອຸ່ນຫລ້າ ໄຊຍະສິດ
6. ສະຫາຍ ບຸນທຽນ ແກ້ວບົວພາດ
7. ສະຫາຍ ນາງ ມີນາພອນ ໄຊສົມພູ
8. ສະຫາຍ ເພັດແກ້ວ ເຮືອງປັນຍາ
9. ສະຫາຍ ບຸນທະມາລີ ໝັ້ນອານົງ
10. ສະຫາຍ ພັອ ກັນໄຍ ໄຊຍະສິດ
11. ສະຫາຍ ພັອ ທອງຈັນ ຈັນທະພົງ
12. ສະຫາຍ ຄຳຫວັນ ຈັນທະໂຄດ
13. ສະຫາຍ ບຸນເສີດ ເສດທິລາດ
14. ສະຫາຍ ສົມໄຊ ແກ້ວໂພສິງ

- **ຜູ້ແທນສຳຮອງ**

1. ສະຫາຍ ສະຫາຍ ບຸນນາວ ຈັນດອນ
2. ສະຫາຍ ສຸກສະໄໝ ຈັນທະມາດ

ກອງປະຊຸມໃຫ່ຍໄດ້ຮັບຟັງການໂອ້ລົມຈາກສະຫາຍ ດຣ ບຸນປອນ ບຸດຕະນະວົງ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ທີ່ຕາງໜ້າໃຫ້ກົມການເມືອງສູນກາງພັກໄດ້ຕີລາຄາສູງ ແລະ ໄດ້ສະແດງຄວາມຊົມເຊີຍຕໍ່ການຊີ້ນຳ-ນຳພາຂອງຄະນະພັກຊຸດຜ່ານມາທີ່ໄດ້ຊີ້ນຳ-ນຳພາພະນັກງານ ສະມາຊິກພັກ,ປະຊາຊົນບັນດາເຜົ່າ ປະຕິບັດໜ້າທີ່ການເມືອງຂອງຕົນ ຍາດໄດ້ຜົນສຳເລັດຫລາຍດ້ານ ທັງ

ມີຄວາມໜັກແໜ້ນເຂັ້ມແຂງຂຶ້ນກວ່າເກົ່າ; ສະຫາຍຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍ ຕໍ່ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ໄດ້ໃຫ້ທິດຊີ້ນຳວຽກງານແຕ່ລະດ້ານ; ສະຫາຍມີຄວາມເຊື່ອໝັ້ນຕໍ່ຄະນະບໍລິຫານງານພັກແຂວງຊຸດໃໝ່ທີ່ຈະສືບຕໍ່ຊີ້ນຳ-ນຳພາ ໂດຍສະເພາະແມ່ນ ສະຫາຍເລຂາພັກແຂວງ ທີ່ຈະເປັນຄັນທຸງນຳໜ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງອັດຕະປື ຄັ້ງທີ X ໃຫ້ປະກົດຜົນເປັນຈິງ ຕາມລະດັບຄາດໝາຍທີ່ໄດ້ກຳນົດໄວ້.ກອງປະຊຸມຮຽກຮ້ອງມາຍັງບັນດາສະຫາຍສະມາຊິກພັກ, ພະນັກງານ ແລະ ປະຊາຊົນບັນດາເຜົ່າຊາວແຂວງອັດຕະປື ຈົ່ງໄດ້ເອົາໃຈໃສ່ສຸມທຸກສະຕິປັນຍາເຂົ້າໃສ່ການຈັດຕັ້ງປະຕິບັດ ແລະ ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງຕົນ ເພື່ອເຮັດໃຫ້ເນື້ອໃນກອງປະຊຸມໃຫຍ່ຜູ້ແທນອົງຄະນະພັກແຂວງອັດຕະປື ຄັ້ງນີ້ໄດ້ຮັບການຈັດຕັ້ງປະຕິບັດ ແລະ ຫັນເປັນແຜນງານ, ໂຄງການລະອຽດ ແນ່ໃສ່ເພື່ອສ້າງແຂວງອັດຕະປືມີການຫັນປ່ຽນທີ່ຕັ້ງໜ້າ ແລະ ມີການພັດທະນາກ້າວຂຶ້ນຢ່າງບໍ່ຢຸດຢັ້ງ.

ທີ່ ແຂວງອັດຕະປື ວັນທີ 11 ຫາ 12 ສິງຫາ 2015

ເລຂາຄະນະບໍລິຫານງານພັກແຂວງອັດຕະປື